# ມິຊຊາອາທິດທີ 29 ກຳນົດທຳມະດາປີ A
# ວັນທີ 18 ຕຸລາ 2020



**ພຣະວໍລະສານໂດຍນັກບຸນມັດເທວ 22, 15-21**

ໃນເວລານັ້ນ, ພວກຟາຣີເຊວໄດ້ອອກໄປປະຊຸມປຶກສາຫາລືກັນເພື່ອຈັບຜິດພຣະເຢຊູເຈົ້າໃນຄວາມເວົ້າ. ແລ້ວພວກເຂົາໄດ້ສົ່ງລູກສິດຂອງຕົນພ້ອມທັງລູກນ້ອງຂອງກະສັດເຮຣອດເຂົ້າໄປຫາພຣະອົງທູນວ່າ: "ພຣະອາຈານ, ພວກຂ້ານ້ອຍຊາບວ່າທ່ານເປັນຄົນຊື່ກົງ, ສັ່ງສອນບອກທາງຂອງພຣະເປັນເຈົ້າຕາມຄວາມສັດຈິງໂດຍບໍ່ຢ້ານກົວຜູ້ໃດແລະບໍ່ເຫັນແກ່ຊັ້ນວັນນະໃດ. ເຊີນທ່ານບອກໃຫ້ພວກຂ້ານ້ອຍຊາບເຖິງຄວາມຄິດຄວາມເຫັນຂອງທ່ານໃນເລື່ອງທີ່ວ່າ ມີອະນຸຍາດເສຍຊ່ວຍໃຫ້ເຈົ້າເຊຊາຫລືບໍ່?" ແຕ່ພຣະເຢຊູເຈົ້າຊາບເຖິງເຈດຕະນາຊົ່ວຮ້າຍຂອງພວກເຂົາ. ພຣະອົງຈຶ່ງກ່າວວ່າ: "ໂອພວກໜ້າຊື່ໃຈຄົດເອີຍ, ເປັນຫຍັງພວກເຈົ້າຈຶ່ງແຕ່ງອຸບາຍເພື່ອຈັບຜິດເຮົາ? ຈົ່ງເອົາເງິນທີ່ໃຊ້ເສຍຊ່ວຍມາໃຫ້ເຮົາເບິ່ງ". ພວກເຂົາຈຶ່ງເອົາຫລຽນໜຶ່ງມາຖະຫວາຍ. ແລ້ວພຣະອົງຖາມພວກເຂົາວ່າ: "ຮູບແລະຕົວອັກສອນນີ້ແມ່ນຂອງຜູ້ໃດ?" ພວກເຂົາຕອບພຣະອົງວ່າ: "ແມ່ນຂອງເຈົ້າເຊຊາ". ພຣະເຢຊູເຈົ້າຕອບພວກເຂົາວ່າ: "ຂອງເຈົ້າເຊຊາ ກໍຈົ່ງສົ່ງຄືນໃຫ້ເຈົ້າເຊຊາ ແລະຂອງພຣະເປັນເຈົ້າກໍຈົ່ງສົ່ງຄືນໃຫ້ພຣະເປັນເຈົ້າ".

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ມທ 22, 15-21**

ບົດອ່ານທັງສາມບົດຊຶ່ງພວກເຮົາໄດ້ຟັງວັນອາທິດນີ້ລ້ວນແຕ່ກ່າວເຖິງພຣະຄຸນແຫ່ງການເລືອກສັນຂອງພຣະເປັນເຈົ້າ.

ໃນບົດອ່ານທີໜຶ່ງຈາກໜັງສືຂອງປະພາສົກອີຊາຢາ, ພຣະເຈົ້າໄດ້ເລືອກສັນຊີຣຸສ, ໄດ້ສະເຫລີມເຂົາດ້ວຍນ້ຳມັນ, ໄດ້ແຕ່ງຕັ້ງເຂົາໃຫ້ເປັນກະສັດນຳພາແລະປົກຄອງປະຊາກອນຂອງພຣະອົງໃຫ້ພົ້ນຈາກການທຳຮ້າຍຂອງຊົນຊາດອື່ນ.

ສ່ວນໃນບົດອ່ານທີສອງຈາກຈົດໝາຍຂອງນັກບຸນເປົາໂລຂຽນຫາຊາວເທັກຊາໂລນິກ. ນັກບຸນເປົາໂລພ້ອມກັບຊິນວາໂນແລະຕີໂມເທໄດ້ຕັກເຕືອນແລະໃຫ້ກຳລັງໃຈກຸ່ມກຣິສຕະຊົນທີ່ເມືອງເທັກຊາໂລນິກໂດຍກ່າວວ່າ: ເຖິງວ່າພວກເຮົາພີ່ນ້ອງຈະຕ້ອງພົບກັບຄວາມຫຍຸ້ງຍາກໃນຊີວິດຄວາມເຊື່ອກໍຕາມ ແຕ່ໃຫ້ພວກພີ່ນ້ອງເຊື່ອໝັ້ນແລະໄວ້ໃຈໃນພຣະເຈົ້າ. ເພາະແມ່ນພຣະອົງເອງທີ່ໄດ້ຊົງເລືອກສັນພວກພີ່ນ້ອງໃຫ້ເປັນປະຊາກອນຂອງພຣະອົງ.

ແລະໃນພຣະວໍລະສານ, ພຣະເຢຊູເຈົ້າກໍກ່າວກັບພວກຟາຣີເຊວແລະພວກລູກນ້ອງຂອງກະສັດເຮຣອດທີ່ມາຈັບຜິດພຣະອົງກ່ຽວກັບການເສຍຊ່ວຍຫລືບໍ່ໃຫ້ເຈົ້າເຊຊາວ່າ: "ສິ່ງທີ່ເປັນຂອງເຈົ້າເຊຊາກໍສົ່ງຄືນໃຫ້ເຊຊາ. ສິ່ງທີ່ເປັນຂອງພຣະເຈົ້າກໍສົ່ງຄືນໃຫ້ພຣະເຈົ້າ". ໝາຍວ່າຖ້າພວກຟາຣີເຊວແລະລູກນ້ອງຂອງກະສັດເຮຣອດຮູ້ຈັກຄິດຫາເຊຊາຜູ້ເປັນເຈົ້າປົກຄອງພວກເຂົາແລ້ວ, ເປັນຫຍັງພວກເຂົາບໍ່ຮູ້ຈັກຄິດຫາພຣະເຈົ້າຜູ້ໄດ້ສ້າງພວກເຂົາມາ?

ພວກເຮົາແຕ່ລະຄົນກໍເຊັ່ນດຽວກັນ, ພຣະເຈົ້າໄດ້ສ້າງພວກເຮົາມາແລະໄດ້ຊົງເລືອກສັນພວກເຮົາໃຫ້ເປັນປະຊາກອນຂອງພຣະອົງຜ່ານທາງສິນລ້າງບາບ. ພຣະອົງໄດ້ໝາຍພວກເຮົາດ້ວຍນ້ຳມັນສັກສິດເພື່ອໃຫ້ພວກເຮົາເປັນກະສັດ, ສົງແລະປະພາສົກຂອງພຣະອົງ. ແຕ່ຫລາຍຄັ້ງພວກເຮົາໄດ້ຄິດຫາສິ່ງທີ່ເປັນຂອງໂລກຫລາຍກວ່າພຣະເຈົ້າ. ພວກເຮົາໄດ້ໃຫ້ຄວາມສຳຄັນກັບຊີວິດການເປັນຢູ່, ຄວາມຮັ່ງມີແລະຊື່ສຽງໃນສັງຄົມຫລາຍກວ່າພຣະເຈົ້າ.

ວັນນີ້, ພຣະເຢຊູເຈົ້າໄດ້ສອນພວກເຮົາໃຫ້ຮູ້ຈັກສົ່ງຄືນສິ່ງທີ່ເປັນຂອງໂລກໃຫ້ໂລກ. ແລະສິ່ງທີ່ເປັນຂອງພຣະເຈົ້າໃຫ້ພຣະເຈົ້າ. ໝາຍວ່າໃຫ້ພວກເຮົາຫັນມາຫາພຣະອົງເພື່ອນົບໄຫວ້ບູຊາ, ຮັກແລະເຊື່ອໝັ້ນໃນພຣະອົງແຕ່ຜູ້ດຽວ. ຍ້ອນຂາດພຣະອົງແລ້ວ, ພວກເຮົາເຮັດຫຍັງບໍ່ໄດ້ເລີຍ.

**ພາວະນາ**

ໂອພຣະເຈົ້າ, ລູກຂໍຂອບພຣະຄຸນພຣະອົງທີ່ໄດ້ສ້າງລູກມາແລະໄດ້ຊົງເລືອກສັນລູກໃຫ້ເປັນປະຊາກອນຂອງພຣະອົງ. ໂຜດຊ່ວຍລູກໃຫ້ຮູ້ຈັກນົບໄຫວ້ບູຊາ, ຮັກແລະເຊື່ອໝັ້ນໃນພຣະອົງແຕ່ຜູ້ດຽວໃນຊີວິດຂອງລູກດ້ວຍເທີ້ນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ